ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ກະສິກຳ ແລະ ປ່າໄມ້
ກົມປູກຝັງ

ເລກທີ 1046 /ກປຝ
ນະຄອນຫຼວງວຽງຈັນ, ວັນທີ 26 MAY 2016

ເລກທີ 1346
ວັນທີ 23/06/16

ກະຊວງອຸດສາຫະກຳແລະການຄ້າ
...ການນຳເຂົ້າແລະສົ່ງອອກ
ເລກທີ 310
ວັນທີ 24/06/2016

## ແຈ້ງການແນະນຳ

**ຮຽນ:** ທ່ານ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ເພີ່ມທະວີຄວາມເອົາໃຈໃສ່ ໃນການຢັ້ງຢືນສຸຂານາໄມພືດ ແລະ ຜະລິດຕະພັນພືດ ຂອງ ສປປ ລາວ ທີ່ສົ່ງອອກໄປຍັງສະຫະພາບເອີຣົບ.

- ອີງຕາມ ກົດໝາຍ ວ່າດ້ວຍການປ້ອງກັນພືດ ສະບັບເລກທີ 06/ສພຊ, ລົງວັນທີ 9 ທັນວາ 2008;
- ອີງຕາມ ດຳລັດ ແນະນຳປະຕິບັດກົດໝາຍ ວ່າດ້ວຍການປ້ອງກັນພືດ ສະບັບເລກທີ 229/ລບ, ລົງວັນທີ 31 ພຶດສະພາ 2012;
- ອີງຕາມ ຄຳສັ່ງ ກ່ຽວກັບການເພີ່ມທະວີຄວາມເຂັ້ມງວດ ໃນການນຳໃຊ້ມາດຕະການສຸຂານາໄມພືດ ເພື່ອແກ້ໄຂບັນຫາຕໍ່ການແຈ້ງເຕືອນຂອງສະຫະພາບເອີຣົບ (EU) ສະບັບເລກທີ 2109/ກປ, ລົງວັນທີ 27/04/2016.

ເພື່ອຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍຄຳສັ່ງຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເລກທີ 2109/ກປ, ລົງວັນທີ 27/04/2016 ກ່ຽວກັບການເພີ່ມທະວີຄວາມເຂັ້ມງວດ ໃນການນຳໃຊ້ມາດຕະການສຸຂານາໄມພືດເພື່ອແກ້ໄຂບັນຫາຕໍ່ການແຈ້ງເຕືອນຂອງສະຫະພາບເອີຣົບແນໃສ່ຮັບປະກັນການສົ່ງອອກພືດ ແລະ ຜະລິດຕະພັນພືດ ຈາກ ສປປ ລາວ ໄປຍັງສະຫະພາບເອີຣົບໃຫ້ຖືກຕ້ອງ, ມີຄວາມໂປ່ງໃສ ແລະສອດຄ່ອງກັບເງື່ອນໄຂດ້ານສຸຂານາໄມພືດ ສຳລັບການນຳເຂົ້າຂອງສະຫະພາບເອີຣົບ, ດັ່ງນັ້ນ ກົມປູກຝັງຈຶ່ງອອກແຈ້ງການແນະນຳດັ່ງນີ້:

1. ໃຫ້ຂະແໜງປູກຝັງປະຈຳແຂວງ ແລະ ນະຄອນຫລວງວຽງຈັນ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງປະຕິບັດຢ່າງເດັດຂາດ ແລະ ເຂັ້ມງວດບາງວຽກງານດັ່ງລຸ່ມນີ້:
   - 1.1. ທຸກໆ ພືດ ແລະ ຜະລິດຕະພັນພືດ ທີ່ສົ່ງອອກໄປຍັງສະຫະພາບເອີຣົບ ຕ້ອງຈົດທະບຽນສວນປູກ/ຟາມ, ໂຮງເຮືອນຫຸ້ມຫໍ່ ແລະ ບໍລິສັດສົ່ງອອກ ນຳຂະແໜງປູກຝັງປະຈຳແຂວງ ແລະ ນະຄອນຫລວງວຽງຈັນ ໂດຍມີການຢັ້ງຢືນຈາກ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ (ເອກະສານຄັດຊ້ອນທ້າຍ ເຊັ່ນ: ແບບຟອມ ແລະ ຮ່າງໃບທະບຽນ...);
   - 1.2. ການສົ່ງອອກພືດ ແລະ ຜະລິດຕະພັນພືດ ໄປຍັງສະຫະພາບເອີຣົບ ຕ້ອງໄດ້ກວດກາວິໄຈບໍ່ໃຫ້ມີສານເຄມີຕົກຄ້າງ (Maximum Residue Limits, MRLs) ເກີນມາດຕະຖານທີ່ກຳນົດ ແລະ ບໍ່ໃຫ້ມີເຊື້ອຈຸລິນຊີຕິດແປດ ໂດຍສະເພາະເຊື້ອ *Salmonella* ແລະ ເຊື້ອ *Escherichia coli* ພ້ອມທັງມີໃບຢັ້ງຢືນ

ຜົນການວິໃຈຈາກຫ້ອງວິໃຈອ້າງອີງ ທີໄດ້ຮັບການຮັບຮອງ ແລະ ຢັ້ງຢືນຕາມມາດຕະຖານສາກົນ ISO 17025;

1.3. ກ່ອນອອກໃບຢັ້ງຢືນສຸຂານາໄມພືດ (Phytosanitary Certificate), ໃຫ້ເພີ່ມທະວີການກວດກາ, ການສຸ່ມເກັບຕົວຢ່າງສິນຄ້າຕົວຈິງ ເພື່ອຮັບປະກັນບໍ່ໃຫ້ມີການຕິດແປດສັດຕູພືດກັກກັນ ຂອງ ສະຫະພາບເອີຣົບ ທີ່ກໍານົດໄວ້ (ເອກະສານຄັດຊ້ອນທ້າຍເຊັ່ນ: ສັງລວມບັນຊີສັດຕູພືດກັກກັນຕາມການແຈ້ງເຕືອນຂອງເອີຣົບ);

1.4. ສ່ວນເລກລະຫັດຂອງໃບທະບຽນສວນປູກ/ຟາມ, ໂຮງເຮືອນຫຸ້ມຫໍ່ ແລະ ບໍລິສັດສົ່ງອອກ ແມ່ນ ພະແນກກັນກັນພືດ, ກົມປູກຝັງ ເປັນຜູ້ກໍານົດໃຫ້.

2. ເປັນເຈົ້າການໃນການໂຄສະນາເຜີຍແຜ່ບັນດານິຕິກໍາ ແລະ ເງື່ອນໄຂການນໍາເຂົ້າພືດ ແລະ ຜະລິດຕະພັນພືດຂອງສະຫະພາບເອີຣົບ ໃຫ້ຜູ້ສົ່ງອອກຮັບຮູ້, ເຂົ້າໃຈ ແລະ ສາມາດຈັດຕັ້ງປະຕິບັດໄດ້ຢ່າງຖືກຕ້ອງ.

3. ແຈ້ງການແນະນໍາສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນໄປຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ມີປະສິດທິພາບສູງ

ກ.ຫົວໜ້າກົມປູກຝັງ

ກົມປູກຝັງ

ສົກທັນ ທາດດາວົງ

<u>ບ່ອນນໍາສົ່ງ:</u>

| | |
|---|---|
| - ພະແນກກະສິກໍາ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ | 01 ສະບັບ "ເພື່ອຮັບຊາບ" |
| - ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ | 01 ສະບັບ "ເພື່ອຮັບຊາບ" |
| - ພະແນກສາທາລະລະສຸກ ແຂວງ, ນະຄອນຫຼວງ | 01 ສະບັບ "ເພື່ອຮັບຊາບ" |
| - ພະແນກການເງິນ ແຂວງ, ນະຄອນຫຼວງ | 01 ສະບັບ "ເພື່ອຮັບຊາບ" |
| - ສະພາການຄ້າ ແລະ ອຸດສາຫະກໍາ | 01 ສະບັບ "ເພື່ອຮັບຊາບ" |
| - ຂະແໜງປູກຝັງແຂວງ, ນະຄອນຫຼວງວຽງຈັນ | 01 ສະບັບ "ເພື່ອຈັດຕັ້ງປະຕິບັດ" |
| - ດ່ານປ້ອງກັນພືດ | 01 ສະບັບ "ເພື່ອຈັດຕັ້ງປະຕິບັດ" |
| - ເກັບມ້ຽນ | 01 ສະບັບ |